ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
------------------------

ກະຊວງ ໄປສະນີ,
ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ: 828 /ປທສ.
ນະຄອນຫຼວງວຽງຈັນ, ວັນທີ: 11 MAR 2015

# ຂໍ້ຕົກລົງ
## ວ່າດ້ວຍ ການໃຫ້ບໍລິການອິນເຕີເນັດກາເຟ

- ອີງຕາມ ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ) ເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ລັດຖະມົນຕີວ່າການ ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຕິດຕາມ ກວດກາ ແລະ ຄຸ້ມຄອງ ການໃຫ້ບໍລິການອິນເຕີເນັດກາເຟ, ເພື່ອຮັບປະກັນຄຸນນະພາບ ການບໍລິການ ໃຫ້ມີຄວາມວ່ອງໄວ ແລະ ປອດໄພ, ແນໃສ່ສົ່ງເສີມການນຳໃຊ້ອິນເຕີເນັດຢ່າງກ້ວາງຂວາງ ແລະ ທົ່ວເຖິງ, ປະກອບສ່ວນເຂົ້າໃນພາລະກິດ ປົກປັກຮັກສາ ແລະ ພັດທະນາ ປະເທດຊາດ.

**ມາດຕາ 2 ການໃຫ້ບໍລິການອິນເຕີເນັດກາເຟ**

ການໃຫ້ບໍລິການອິນເຕີເນັດກາເຟ ແມ່ນ ການປະກອບການ ສະໜອງບໍລິການເຂົ້າເຖິງອິນເຕີເນັດ ແກ່ຜູ້ຊົມໃຊ້ທົ່ວໄປ ໃນຂອບເຂດ ຮ້ານ ຫຼື ສະຖານທີ່ໃດໜຶ່ງ ທີ່ມີການເຊື່ອມຕໍ່ສັນຍານອິນເຕີເນັດ ຈາກຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອິນເຕີເນັດກາເຟ:** ໝາຍເຖິງ ຮ້ານ ຫຼື ສະຖານທີ່ ໃຫ້ບໍລິການອິນເຕີເນັດ ທີ່ມີເຄືອຂ່າຍຄອມພິວເຕີແບບໃຊ້ສາຍ ຫຼື ບໍ່ໃຊ້ສາຍ ເຊື່ອມຕໍ່ອິນເຕີເນັດ ຈາກເຄືອຂ່າຍ ຂອງຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ;
2. **ເຄືອຂ່າຍຄອມພິວເຕີແບບໃຊ້ສາຍ** ໝາຍເຖິງ ການເຊື່ອມຕໍ່ລະຫວ່າງອຸປະກອນຄອມພິວເຕີ ຫຼື ອຸປະກອນອີເລັກໂຕຣນິກ ເຂົ້າຫາກັນ ຜ່ານສາຍທອງແດງ ຫຼື ສາຍແກ້ວໃຍແສງ;